*Souphanouvong University Journal of Multidisciplinary Research and Development*
**2024,Vol. 10, No. 1, 60-69**
**https://doi.org/10.69692/SUJMRD100160**

# Study of Participation from Related Sectors for Nam Po Demonsatration area Management of Vangvieng district, Vientiane Province, Lao PDR

**Souksakhone Chanthavong***
*Department of Water Resources Development and Management, Faculty of Water Resources, National University of Laos, Lao PDR*

***Correspondence:***
*Souksakhone Chanthavong, Ministry of Natural resources and Environment*
*Tel: +856 20 96474020, E-mail: souksakhone0804@gmail.com*

***Article Info:***
*Submitted: Dec 05, 2023*
*Revised: Jan 05, 2024*
*Accepted: Jan 24, 2024*

## Abstract

The purpose of this research is: 1) To study the participation of related organizations in the management of Nam Po Demonstration Area, 2) To evaluate the activities of people's participation in the management of Nam Po Demonstration Area, 3) To promote activities that people benefit from and have income from various activities in the said area. The research method used in this study was to interview a sample group including: government officials from 6 offices, village level authorities in 7 villages and a sample group of people who represent all the people in 7 villages that are determined by using percentage criteria or estimation of values from the population which is considered to select 10% of the total population. Analysis of data from the interview with descriptive statistics using 02 programs: Excel and SPSS. The research results found: The participation of relevant parties in the management of Nam Po demonstration area which includes staff level employees from 6 offices who participated in 10 activities (tasks). Among them, there are 07 activities with an average value ($\bar{X}$=3; meaning: regular participation) and another 03 activities with an average value ($\bar{X}$=2; meaning: occasional participation) and people's participation in the management of the Nam Po demonstration area includes 4 activities such as participation in studying the problem situation and finding ways to solve the problem; Participating in awareness, dissemination of information and implementation of management tasks; Contributing labor and material to management work; Participating in planning, following the plan, monitoring, evaluating and reporting the results of the management of Nam Po demonstration area in 4 activities, it is seen that the level of participation is equal to the average value ($\bar{X}$=3; means: moderate level participation). For the promotion of activities that people benefit from and have income from Nam Po Demonstration Area: promoting the development of tourist attractions, creating careers or hiring people in the area to work in the activities in the tourist attractions that have been created; Promote knowledge and train people who have the knowledge to assemble according to the needs of various activities created in the area; As well as promoting production in particular, agricultural production, creating activities and works that make the people in the area benefit the most directly or indirectly both now and in the future.

**Keywords:** *National Demonstration Area, Management, NamSong Basin, participation, Statistical Package for the Social Science (SPSS)*

## 1. ພາກສະເໜີ

ສປປ ລາວ ເປັນປະເທດໜຶ່ງທີ່ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ໂດຍສະເພາະແມ່ນຊັບພະຍາກອນນ້ຳ ເຊິ່ງຊັບພະຍາກອນດັ່ງກ່າວ ໄດ້ເປັນທ່າແຮງອັນຕົ້ນຕໍໃນການພັດທະນາເສດຖະກິດ-ສັງຄົມ ແລະ ສ້າງລາຍຮັບໃຫ້ແກ່ປະເທດຊາດ ທີ່ມາຈາກການພັດທະນາພະລັງງານໄຟຟ້າ, ຊົນລະປະທານ, ການຜະລິດກະສິກຳ ແລະ ການພັດທະນາອື່ນໆ ຕາມຄວາມຈຳເປັນ. ໃນນັ້ນ, 1 ໃນ 7 ຍຸດທະສາດແຫ່ງຊາດ 2016-2025 ກໍ່ຄື ການປົກປັກຮັກສາ ແລະ ການນຳໃຊ້ ຊັບພະຍາກອນທຳມະຊາດ ແບບຍືນຍົງ, ໝັ້ນຄົງ, ມີປະສິດທິພາບ ແລະ ໄປຕາມທິດທາງສີຂຽວ (ກົມຊັບພະຍາກອນນ້ຳ, 2014). ແຕ່ເມື່ອຄຳນຶງເຖິງສະພາບການຂອງໂລກໃນປັດຈຸບັນ ລວມທັງ ສປປ ລາວ ຂອງພວກເຮົາເປັນປະເທດໜຶ່ງທີ່ກຳລັງປະເຊີນກັບການປ່ຽນແປງໃນຫຼາຍດ້ານ ເຊັ່ນ: ການເພີ່ມຂຶ້ນຂອງປະຊາກອນ, ການຂະຫຍາຍຕົວດ້ານເສດຖະກິດ, ການຂະຫຍາຍພື້ນທີ່ທາງດ້ານທີ່ຢູ່ອາໄສ, ການຂຸດຄົ້ນແຮ່ທາດຕ່າງໆ. ພ້ອມກັນນັ້ນ, ຍັງມີບັນຫາການປ່ຽນແປງສະພາບດິນຟ້າອາກາດ ແລະ ການເກີດໄພພິບັດຕ່າງໆ ນັບມື້ນັບຮຸນແຮງຂຶ້ນເລື້ອຍໆ. ສິ່ງດັ່ງກ່າວຖ້າບໍ່ມີແຜນການຄຸ້ມຄອງທີ່ເໝາະສົມອາດຈະເຮັດໃຫ້ເກີດມີບັນຫາກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນອະນາຄົດໄດ້ (Phetoai, 2021).

ເຂດສາທິດນ້ຳເປາະ ເປັນພື້ນທີ່ໜຶ່ງທີ່ນອນຢູ່ໃນອ່າງຮັບນ້ຳຊອງ ມີລັກສະນະພູມສັນຖານສ່ວນໃຫຍ່ເປັນ ເຂດພູຜາຊັນ, ມີທັດສະນີຍະພາບທີ່ສວຍງາມທາງທຳມະຊາດ ແລະ ເປັນເຂດໜຶ່ງທີ່ໃກ້ກັບເທດສະບານຕົວເມືອງວັງວຽງ. ໃນນັ້ນ, ເຂດສາທິດນ້ຳເປາະ ຍັງປະກອບມີສະຖານທີທ່ອງທ່ຽວທີ່ບໍ່ທັນໄດ້ເປີດໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວຊົມ ເຊັ່ນ: ນ້ຳຕົກຕາດ ເປັນສະຖານທີ່ຊົມວິວທິວທັດທາງທຳມະຊາດຂອງ ເມືອງວັງວຽງ, ມີຫ້ວຍນ້ຳທີ່ໄສເຢັນ, ມີຈຸດເບິ່ງນົກ, ສັດປ່າ ແລະ ຕອນເໜືອຂອງເຂດສາທິດນ້ຳເປາະ ມີສາຍນ້ຳເປາະເປັນສາຂາຂອງສາຍນ້ຳຊອງໄຫຼຜ່ານ. ເວົ້າລວມແລ້ວ ເຂດສາທິດນ້ຳເປາະ ເປັນເຂດໜຶ່ງທີ່ເປັນທ່າແຮງຕົ້ນຕໍໃນການພັດທະນາ ເສດຖະກິດ-ສັງຄົມ ແລະ ສ້າງລາຍຮັບໃຫ້ແກ່ລັດຖະບານ ເຊັ່ນ: ການທ່ອງທ່ຽວແບບອະນຸລັກທຳມະຊາດ, ກະສິກຳ, ປະມົງ ແລະ ອື່ນໆ. ເຫັນໄດ້ເຖິງຄວາມສຳຄັນຂອງເຂດສາທິດນ້ຳເປາະ, ກະຊວງ ຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ຊຶ່ງເປັນເສນາທິການໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ໂດຍຮ່ວມມື ກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງວຽງຈັນ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງວັງວຽງ, ພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງພ້ອມທັງພໍ່ແມ່ປະຊາຊົນທີ່ອາໃສ່ຢູ່ອ້ອມເຂດສວນສາທິດນ້ຳເປາະ, ເອົາໃຈໃສ່ໃນການຄຸ້ມຄອງ ແລະ ປົກປັກຮັກສາຊັບພະຍາກອນນ້ຳ ແລະ ທຳມະຊາດໃຫ້ມີຄວາມຍືນຍົງ ແລະ ນຳໃຊ້ໃຫ້ເກີດປະສິດທິຜົນສູງສຸດ, ຕາມທິດສີຂຽວ ແລະ ຍືນຍົງ, ເປັນເຂດສາທິດສຶກສາຄົ້ນຄວ້າ ແລະ ຝຶກອົບຮົມໃຫ້ແກ່ນັກຮຽນ, ນັກສຶກສາ, ພະນັກງານ ແລະ ໃຫ້ຄວາມຮູ້ແກ່ສາທາລະນະ (ກົມຊັບພະຍາກອນນ້ຳ, 2023).

ຈາກເຫດຜົນດັ່ງກ່າວ ການສຶກສາການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ເຂດສາທິດນ້ຳເປາະ ເມືອງວັງວຽງ, ແຂວງວຽງຈັນ. ຈຶ່ງມີຄວາມສຳຄັນເພື່ອຮັບຮູ້ເຖິງພາລະບົດບາດຂອງແຕ່ລະພາກສ່ວນໃນການມີສ່ວນຮ່ວມຄຸ້ມຄອງ ລວມໄປເຖິງບັນຫາອຸປະສັກ ແລະ ແນວທາງທີ່ຈະຊ່ວຍເສີມສ້າງການວຽກງານໃນການພັດທະນາ ແລະ ການຄຸ້ມຄອງ ເຂດສາທິດນ້ຳເປາະ ເພື່ອໃຫ້ເກີດຜົນປະໂຫຍດສູງສຸດ ແກ່ໜ່ວຍງານຕ່າງໆ ແລະ ການພັດທະ ນາຄຸນນະພາບຊີວິດໃນສັງຄົມຂອງຊຸມຊົນໃນປະເທດລາວໃນອະນາຄົດ. ດັ່ງນັ້ນ, ການຄົ້ນຄວ້າຄັ້ງນີ້ ປະກອບມີ 03 ຈຸດປະສົງຄື: 1) ເພື່ອສຶກສາການມີສ່ວນຮ່ວມຂອງອົງການ ຈັດຕັ້ງທີ່ກ່ຽວຂ້ອງໃນການຄຸ້ມຄອງ ເຂດສາທິດນ້ຳເປາະ, 2) ເພື່ອປະເມີນຫາກິດຈະກຳໃນການມີສ່ວນຮ່ວມຂອງປະ ຊາຊົນໃນການຄຸ້ມຄອງ ເຂດສາທິດນ້ຳເປາະ, 3) ເພື່ອສົ່ງ ເສີມກິດຈະກຳທີ່ປະຊາຊົນໄດ້ຮັບຜົນປະໂຫຍດ ແລະ ມີລາຍຮັບຈາກກິດຈະກຳຕ່າງໆຢູ່ເຂດດັ່ງກ່າວ.

## 2. ວິທີການຄົ້ນຄວ້າ

### 2.1 ສະພາບລວມຂອງພື້ນທີ່ຄົ້ນຄວ້າ

#### 2.1.1 ລັກສະນະທີ່ຕັ້ງ ແລະ ຂອບເຂດພື້ນທີ່ຄົ້ນຄວ້າ

ເຂດສາທິດນ້ຳເປາະ ຕັ້ງຢູ່ເມືອງວັງວຽງ, ແຂວງວຽງຈັນ. ຫ່າງຈາກຕົວເມືອງວັງວຽງ ປະມານ 5 ກິໂລແມັດ. ມີເນື້ອທີ່ 618.92 ຮຕ, ຈຸດສູງສຸດຂອງສວນສາທິດນ້ຳເປາະແມ່ນ 542 ແມັດ ທຽບໃສ່ໜ້ານ້ຳທະເລປານກາງ. ມີເນື້ອທີ່ກວມເອົາ ພູພົງ ແລະ ພູບານນ້ອຍ ລັກສະນະພູມສັນຖານຂອງພື້ນທີ່ສ່ວນຫຼາຍເປັນພູສູງຊັນ ແລະ ບາງສ່ວນເປັນທົ່ງພຽງນ້ອຍໃນພື້ນທີ່ສວນສາທິດນ້ຳເປາະແມ່ນມີສາຍນ້ຳ

ເປາະ ເປັນສາຍນ້ຳຫຼັກ ແລະ ສາຍນ້ຳຫ້ວຍ ທີ່ເປັນສາຂາ ຂອງນ້ຳເປາະມີຢູ່ 5 ສາຍຫ້ວຍຄື: ຫ້ວຍທານີ, ຫ້ວຍຜັກກູດ , ຫ້ວຍປາເຊືອມ, ຫ້ວຍນ້ຳປຸງ, ຫ້ວຍໝາກສານ, ຫ້ວຍປາດຸກ ແລະ ຫ້ວຍກົ່ວຂະໜາດ. ເຂດສາທິດດັ່ງກ່າວ ກວມເອົາ 7 ບ້ານ ຄື:ທິດເໜືອຕິດກັບ ບ້ານວຽງສະໃໝ ແລະ ບ້ານນາແຄ, ທິດໃຕ້ຕິດກັບ ບ້ານນາດ້ອງ ແລະ ບ້ານໂພນເພັງ, ທິດຕາເວັນອອກຕິດກັບ ບ້ານນາດ້ອງ ແລະ ບ້ານນາແຄ, ທິດຕາເວັນຕົກຕິດກັບ ບ້ານວຽງສະໃໝ, ບ້ານປາກເປາະ, ບ້ານພູດິນແດງ, ບ້ານຫ້ວຍສະເຫງົ້າ ແລະ ບ້ານໂພນເພັງ.ເຂດສາທິດນ້ຳເປາະດັ່ງກ່າວແມ່ນມີຄວາມສຳຄັນຕໍ່ປະຊາຊົນ ເຊັ່ນວ່າ: ການຫາໜໍ່ໄມ້ ແລະ ເຄື່ອງປ່າຂອງດົງ. ພ້ອມດຽວກັນນັ້ນ ຍັງເປັນບ່ອນສຶກສາຄົ້ນຄ້ວາຮຽນຮູ້ ແລະ ທັດສະນະສຶກສາ ໃຫ້ແກ່ນັກຮຽນ, ນັກສຶກສາ, ນັກຄົ້ນຄ້ວາ ກ່ຽວກັບຊັບພະຍາກອນນ້ຳລະບົບນິເວດວິທະຍາ ແລະ ຊີວະນາໆພັນ. ນອກຈາກນັ້ນ ພື້ນທີ່ດັ່ງກ່າວ ຍັງເປັນແຫຼ່ງທ່ອງທ່ຽວທາງທຳມະຊາດທີ່ໜ້າສົນໃຈໃຫ້ແກ່ນັກທ່ອງທ່ຽວອີກດ້ວຍ.




ຮູບທີ 1 ແຜນທີ່ສະແດງຂອບເຂດພື້ນທີ່ສຶກສາ

### 2.1.2 ສະພາບພູມອາກາດ

ອ່າງຮັບນ້ຳຍ່ອຍນ້ຳຊອງ ຢູ່ໃນເຂດພູມອາກາດເຂດຮ້ອນ, ລະດູຝົນຕົກຢູ່ໃນລະຫວ່າງ ເດືອນພຶດສະພາ ຫາ

ເດືອນກັນຍາ ແລະ ລະດູແລ້ງຢູ່ໃນ ເດືອນຕຸລາ ຫາ ເດືອນເມສາ. ອຸນຫະພູມໃນຂອບເຂດອ່າງຮັບນໍ້າຍ່ອຍນໍ້າຊອງ ມີການປ່ຽນແປງລະຫວ່າງ 10°C ໃນເດືອນທັນວາ ຫາ 40°C ໃນເດືອນ ເມສາ, ອຸນຫະພູມສະເລ່ຍລາຍວັນປະມານ 24 ຫາ 30 °C. ຝົນສະເລ່ຍລາຍປີປະມານ 3,500 ມມ ທີ່ເມືອງວັງວຽງ (Phommalin, 2014). ອັດຕາການສະເລ່ຍລາຍເດືອນສູງສຸດໃນເດືອນ ກໍລະກົດ 151 m$^3$/s ແລະ ຕໍ່າສຸດໃນເດືອນ ມີນາ 8.4 m$^3$/s (Keochan, 2014).

## 2.2 ວິທີການສຶກສາ

### 2.2.1 ການກໍາໜົດກຸ່ມຕົວຢ່າງ

ການກໍານົດກຸ່ມຕົວຢ່າງການສຶກສາຄັ້ງນີ້ ດ້ວຍວິທີການໃຊ້ຫຼັກເກນສ່ວນຮ້ອຍ ຫຼື ການປະມານຄ່າຈາກຈໍານວນປະຊາກອນ. ໃນນັ້ນ, ຈໍານວນປະຊາກອນທັງໝົດຢູ່ຫຼັກຮ້ອຍ ສາມາດກໍານົດຂະໜາດກຸ່ມຕົວຢ່າງຢູ່ລະຫວ່າງ 15–30%; ຖ້າຈໍານວນປະຊາກອນທັງໝົດຢູ່ຫຼັກພັນແມ່ນ 10–15% ແລະ ຖ້າຈໍານວນປະຊາກອນທັງໝົດເປັນຫຼັກມື່ນ ສາມາດກໍານົດເອົາ 5–10% ລັກສະນະການສໍາພາດໂດຍອີງໃສ່ແບບຟອມສໍາພາດ (Krejcie & Morgan, 1970). ການຄົ້ນຄວ້າໃນຄັ້ງນີ້ໄດ້ພິຈາລະນາເລືອກເອົາ 10% ຂອງປະຊາກອນທັງໝົດ 1,509 ຄົວເຮືອນ. ຜົນການຄໍານວນພົບວ່າ ກຸ່ມຕົວຢ່າງທີ່ຕ້ອງພິຈາລະນາເຂົ້າໃນການສໍາພາດທັງໝົດຈໍານວນ 151 ຕົວຢ່າງ (ຕົວແທນຂອງປະຊາຊົນລະດັບຄົວເຮືອນ). ໃນນັ້ນ, ປະກອບມີອໍານາດການປົກຄອງຈາກ 7 ບ້ານ, ບ້ານລະ 01 ທ່ານ ແລະ ພະນັກງານການນໍາພາກລັດ (ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນສູນກາງ) ຈາກ 6 ຫ້ອງການ , ຫ້ອງການລະ 01 ທ່ານ. ສະນັ້ນ, ລວມຂະໜາດກຸ່ມຕົວຢ່າງທັງໝົດເທົ່າກັບ 164 ຕົວຢ່າງ (ຕົວແທນຂອງການຄົ້ນຄວ້າ).

### 2.2.2 ການນໍາໃຊ້ແບບຟອມສໍາພາດ

ແບບຟອມສໍາພາດປະກອບມີ: ພະນັກງານການນໍາພາກລັດ, ອໍານາດການປົກຄອງຂັ້ນບ້ານ ແລະ ປະຊາຊົນກຸ່ມຕົວຢ່າງທີ່ເປັນຕົວແທນໃຫ້ແກ່ປະຊົນທັງໝົດຢູ່ໃນພື້ນທີ່ສຶກສາ. ແບບສອບສໍາພາດມີທັງ ຄໍາຖາມປາຍປິດ ແລະ ຄໍາຖາມປາຍເປີດ. ເຊິ່ງແບ່ງອອກເປັນ 2 ພາກສ່ວນຄື: ພາກສ່ວນທີ 1 (ຂໍ້ມູນທົ່ວໄປຂອງກຸ່ມຕົວຢ່າງເຊັ່ນ: ເພດ, ອາຍຸ, ອາຊີບ, ລະດັບການສຶກສາ ເຫຼົ່ານີ້ເປັນຕົ້ນ) ແລະ ພາກສ່ວນທີ 2 (ຄວາມຄິດເຫັນຂອງ ພະນັກງານການນໍາພາກລັດ, ອໍານາດການປົກຄອງຂັ້ນບ້ານ ແລະ ປະຊາຊົນກຸ່ມຕົວຢ່າງທີ່ຜ່ານການຄັດເລືອກເປັນຕົວແທນໃຫ້ແກ່ບ້ານທັງ 7 ບ້ານ ເຊິ່ງໄດ້ສໍາພາດກ່ຽວກັບ ການມີສ່ວນຮ່ວມຂອງອີງການຈັດຕັ້ງທີ່ກ່ຽວຂ້ອງໃນການຄຸ້ມຄອງເຂດສາທິດນໍ້າເປາະ ແລະ ກິດຈະກໍາໃນການມີສ່ວນຮ່ວມຂອງປະຊາຊົນໃນການຄຸ້ມຄອງເຂດສາທິດນໍ້າເປາະ ລວມໄປເຖິງການສົ່ງເສີມກິດຈະກໍາທີ່ປະຊາຊົນໄດ້ຮັບຜົນປະໂຫຍກ ແລະ ມີລາຍຮັບຈາກກິດຈະກໍາຕ່າງໆຢູ່ເຂດດັ່ງກ່າວ.

### 2.2.3 ການວິເຄາະຂໍ້ມູນ

ເພື່ອບັນລຸຈຸດປະສົງທີ່ຕັ້ງໄວ້ການວິເຄາະຂໍ້ມູນສໍາລັບການຄົ້ນຄວ້າໃນຄັ້ງນີ້ໄດ້ນໍາໃຊ້ສະຖິຕິພັນລະນາໂດຍນໍາໃຊ້ 02 ໂປຣແກຣມຄື: ໂປຣແກຣມ Excel 2013 ແລະ SPSS 10.0; ໃນນັ້ນ, Excel ໄດ້ຖືກນໍາໃຊ້ວິເຄາະຂໍ້ມູນບາງສ່ວນທີ່ໄດ້ຈາກແບບສໍາພາດ ແລະ ໃຊ້ກະກຽມຂໍ້ມູນບາງສ່ວນເພື່ອກຽມຂໍ້ມູນນໍາໄປວິເຄາະດ້ວຍ SPSS; ສ່ວນໂປຣແກຣມ SPSS ໄດ້ຖືກນໍາໃຊ້ເຂົ້າໃນການວິເຄາະຂໍ້ມູນຈາກແບບຟອມສໍາພາດ. ໂດຍສະເພາະໄດ້ວິເຄາະຫາ ສ່ວນຮ້ອຍ (%) ແລະ ຈໍານວນຄະແນນ ທີ່ກຸ່ມຕົວຢ່າງໄດ້ໃຫ້ຄວາມຄິດເຫັນ ຈາການນໍາໃຊ້ແບບຟອມສໍາພາດ.

## 3. ຜົນການຄົ້ນຄວ້າ

### 3.1. ຜົນວິເຄາະຂໍ້ມູນທົ່ວໄປຂອງກຸ່ມຕົວຢ່າງ

### 3.1.1 ຂໍ້ມູນທົ່ວໄປຂອງກຸ່ມຕົວຢ່າງ ລະລັບພະນັກງານຫ້ອງການທີ່ກ່ຽວຂ້ອງ

ຜ່ານການສຶກສາ ໂດຍການສໍາພາດອີງການຈັດຕັ້ງ ຫຼື ພາກສ່ວນ ທີ່ກ່ຽວຂ້ອງ ໂດຍປະກອບມີ 06 ພາກສ່ວນເຊັ່ນ: ຫ້ອງການພາກສະໜາມເຂດສາທິດນໍ້າເປາະ, ຫ້ອງການວັດທະນາທໍາ ແລະ ທ່ອງທ່ຽວ, ຫ້ອງການກະສິກໍາ ແລະ ປ່າໄມ້, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກົມຊັບພະຍາກອນນໍ້າ. ໃນນັ້ນ, ແຍກຕາມເພດ ເຫັນວ່າ: ເພດຊາຍ (50%), ເພດຍິງ (50%); ແຍກຕາມອາຍຸ ແລະ ຢູ່ໃນຊ່ວງອາຍຸລະຫວ່າງ 41-60 ປີ; ເປັນຊົນເຜົ່າລາວລຸ່ມ; ມີລະດັບການສຶກສາ ຊັ້ນສູງ (33%), ປະລິນຍາຕີ (50%), ປະລິນຍາໂທ (17%); ຢູ່ໃນຕໍາແໜ່ງຫົວໜ້າຫ້ອງການ (17%), ຮອງຫົວໜ້າ (17%), ພະນັກງານຫ້ອງການ (67%); ມີອາຍຸການເຮັດວຽກ 2-5 ປີ (67%) ແລະ 6-10 ປີ (33%).

### 3.1.2 ຂໍ້ມູນທົ່ວໄປຂອງກຸ່ມຕົວຢ່າງ ປະຊາຊົນລະດັບຄົວເຮືອນ

1) ກຸ່ມຕົວຢ່າງແຍກຕາມເພດ ແລະ ອາຍຸ ພົບວ່າ ເພດຊາຍ 62% ແລະ ຍິງ 38% ແລະ ແຍກຕາມອາຍຸ ເຫັນວ່າ: ອາຍຸຕໍ່າກວ່າ 25 ປີ 16%, ອາຍຸ 25-60 ປີ 54% ແລະ ອາຍຸຫຼາຍກວ່າ 60 ປີ 30%.

2) ກຸ່ມຕົວຢ່າງແຍກຕາມ ສະຖານະພາບ ແລະ ຊົນເຜົ່າ ພົບວ່າ ຖານະໂສດ 11%, ແຕ່ງງານ 87% ແລະ ເປັນມ້າຍ ຫຼື ຢ່າຮ້າງ 2% ແລະ ແຍກຕາມຊົນເຜົ່າ ເຫັນວ່າ: ລາວລຸ່ມ 54%, ລາວໄຕ່ 11%, ກຶມມຸ 23% ແລະ ລາວມົ້ງ 12%.

3) ກຸ່ມຕົວຢ່າງແຍກຕາມ ລະດັບການສຶກສາ ແລະ ການປະກອບອາຊີບ ພົບວ່າ ຮຽນຈົບສາມັນສຶກສາ 58%, ອະນຸປະລິນຍາ ຫຼື ຊັ້ນສູງ 30% ແລະ ຈົບປະລິຍາຕີຂຶ້ນໄປ 13% ແລະ ແຍກຕາມອາຊີບ ເຫັນວ່າ: ອາຊີບຄ້າຂາຍ 32%, ຊາວກະສິກອນ 26%, ກຳມະກອນ 19%, ພະນັກງານເອກະຊົນ 12% ແລະ ພະນັກງານລັດ 11%.

### 3.2. ຜົນການມີສ່ວນຮ່ວມຂອງອົງການຈັດຕັ້ງທີ່ກ່ຽວຂ້ອງໃນການ ຄຸ້ມຄອງ ເຂດສາທິດນໍ້າເປາະ

ຜ່ານການສຳພາດຄວາມຄິດເຫັນຂອງກຸ່ມຕົວຢ່າງລະດັບພະນັກງານຈາກ 6 ຫ້ອງການທີ່ກ່ຽວຂ້ອງ ຄິດເປັນສ່ວນຮ້ອຍ 100% ໂດຍໄດ້ສຳພາດກ່ຽວກັບ ການມີສ່ວນຮ່ວມໃນການຄຸ້ມຄອງ ເຂດສາທິດນໍ້າເປາະ ເຊິ່ງປະກອບມີ 10 ກິດຈະກຳການມີສ່ວນຮ່ວມ. ໃນນັ້ນ, 7 ກິດຈະກຳ ເຊັ່ນ: ການສ້າງນິຕິກຳ, ລະບຽບ-ກົດໝາຍ ເພື່ອນຳໃຊ້ເຂົ້າໃນວຽກງານການຄຸ້ມຄອງ, ການສ້າງລະບຽບການສະພາະໃນການຄຸ້ມຄອງນຳໃຊ້ ແລະ ວາງນະໂຍບາຍການເກັບຄ່າບູລະນະຕ່າງໆ ຈາກຫົວໜ່ວຍທຸລະກິດທຸກພາກສ່ວນທີ່ກ່ຽວຂ້ອງ, ການລົງເຜີຍແຜ່ນິຕິກຳ, ລະບຽບ-ກົດໝາຍ ໃຫ້ທຸກພາກສ່ວນໄດ້ຮັບຮູ້ ໂດຍສະເພາະຜູ້ທີ່ມີສ່ວນກ່ຽວຂ້ອງດ້ານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ, ການສົມທົບທ້ອງຖິ່ນ ກຳນົດບຸກຄະລາກອນທີ່ມີຄວາມເໝາະສົມ ເພື່ອເປັນຕົວແທນໃນຊຸມຊົນຕ່າງໆໃນການຄຸ້ມຄອງເຂດສາທິດນໍ້າເປາະ, ການສົ່ງເສີມໃຫ້ຜູ້ຍິງເຂົ້າມາມີບົດບາດໃນຂະບວນການ ແລະ ກິດຈະກຳຕ່າງໆໃນການຄຸ້ມຄອງເຂດສາທິດນໍ້າເປາະ ໃນແຕ່ລະຊຸມຊົນໂດຍໃຫ້ມີຜູ້ຍິງເຂົ້າຮ່ວມຢ່າງໜ້ອຍ 30% ໃນຂັ້ນພື້ນຖານ, ການມີສ່ວນຮ່ວມໃນການປັບປຸງລະບຽບການທີ່ມີຢູ່ ແລະ ການສ້າງລະບຽບໃໝ່ໃນບ່ອນທີ່ຍັງບໍ່ມີໃຫ້ເໝາະສົມຕາມຈຸດພິເສດທີ່ບໍ່ຄືກັນໃນແຕ່ລະເຂດການພັດທະນາຂອງຊຸມຊົນ, ການວາງແຜນຄຸ້ມຄອງຢ່າງຮັດກຸມ, ປະສິດທິພາບ ແລະ ມີລັກສະນະທີ່ຍືນຍົງ ໂດຍຄ່າສະເລ່ຍ ($\bar{X}$=3; ມີຄວາມໝາຍວ່າ: ເຂົ້າຮ່ວມປົກກະຕິ) ແລະ ອີກ 3 ກິດຈະກຳ ເຊັ່ນ: ການມີສ່ວນຮ່ວມໃນການຝຶກອົບຮົມທາງດ້ານເຕັກ ນິກສະເພາະ ໃຫ້ກັບຊຸມຊົນທຸກບ້ານທີ່ຢູ່ໃນເຂດສາທິດນໍ້າເປາະ ໂດຍສະເພາະໃນເລື່ອງບົດບາດຍິງ-ຊາຍ, ສ້າງຈິດສຳນຶກ ແລະ ສົ່ງເສີມການນຳໃຊ້ຊັບພະຍາກອນທຳມະຊາດແບບປະຢັດ ຫຼຸດຜ່ອນການນຳໃຊ້ຊັບພະຍາກອນທຳມະຊາດ ແບບຊະຊາຍ, ມີການຈັດກອງປະຊຸມລະດັບຊຸມຊົນ ເພື່ອປຶກສາຫາລືລະຫວ່າງຜູ້ປະກອບການ ທຸກພາກສ່ວນເພື່ອເປັນເອກະພາບໃນແນວທາງການຄຸ້ມຄອງເຂດສາທິດນໍ້າເປາະ ໂດຍຄ່າສະເລ່ຍ ($\bar{X}$=2; ມີຄວາມໝາຍວ່າ: ເຂົ້າຮ່ວມໃນບາງຄັ້ງຄາວ) ເຊິ່ງສະແດງຜົນຂອງການວິເຄາະລາຍລະ ອຽດຂອງແຕ່ລະກິດຈະກຳ.

### 3.3. ຜົນການປະເມີນຫາກິດຈະກຳໃນການມີສ່ວນຮ່ວມຂອງປະຊາຊົນໃນການຄຸ້ມຄອງເຂດສາທິດນໍ້າເປາະ

ຜ່ານການສຳພາດຄວາມຄິດເຫັນຂອງກຸ່ມຕົວຢ່າງ 151 ຕົວຢ່າງ (ຄົນ/ຄົວເຮືອນ) ຄິດເປັນສ່ວນຮ້ອຍ 100% ໂດຍໄດ້ສຳພາດກ່ຽວກັບ ການມີສ່ວນຮ່ວມໃນການຄຸ້ມຄອງ ເຂດສາທິດນໍ້າເປາະ ເຊິ່ງປະກອບມີ 4 ກິດຈະກຳຫຼັກ ແລະ ຫຼາຍກິດຈະກຳຍ່ອຍ ໃນແຕ່ລະກິດຈະກຳມີລະດັບການມີສ່ວນຮ່ວມຂອງປະຊາຊົນທີ່ແຕກຕ່າງກັນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1) ກິດຈະກຳການມີສ່ວນຮ່ວມ ດ້ານການສຶກສາສະພາບບັນຫາ ແລະ ຫາແນວທາງແກ້ໄຂບັນຫາ ເຂດສາທິດນໍ້າເປາະ ປະກອບມີກິດຈະກຳຍ່ອຍ ເຊັ່ນ: ການມີສ່ວນຮ່ວມໃນການກຳນົດ ແລະ ຈັດແບ່ງປະເພດຂອງບັນຫາທີ່ເກີດຂຶ້ນ; ການມີສ່ວນຮ່ວມໃນການບົ່ງບອກສາເຫດ, ຄວາມຮຸນແຮງ ແລະ ຄວາມອັນຕະລາຍຂອງບັນຫາສາເຫດດັ່ງກ່າວ; ການມີສ່ວນຮ່ວມໃນການບອກຕໍ່ໃຫ້ປະຊາຊົນພາຍໃນບ້ານຮັບຮູ້ເຖິງບັນຫາທີ່ເກີດຂຶ້ນໃນພື້ນທີ່; ການມີສ່ວນຮ່ວມໃນການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແລະ ສະເໜີແນວຄວາມຄິດ ພ້ອມຕັດສິນໃຈກຳນົດແນວທາງ ເພື່ອຫາວິ ທີແກ້ໄຂບັນຫາ; ການມີສ່ວນຮ່ວມໃນການກຳນົດນະໂຍ ບາຍ; ສົ່ງເສີມວຽກງານການຄຸ້ມຄອງເພື່ອຫຼຸດຜ່ອນບັນຫາ ແລະ ການມີສ່ວນຮ່ວມ ໃນການກຳນົດລະບຽບຫຼັກການສະ ເພາະເຂົ້າໃນການຄຸ້ມຄອງເພື່ອແກ້

ໄຂບັນຫາ. ບັນດາກິດຈະກຳການມີສ່ວນຮ່ວມທີ່ກ່າວມານີ້ແມ່ນມີຄ່າສະເລ່ຍ ($\bar{X}$= 3; ມີຄວາມໝາຍວ່າ: ມີສ່ວນຮ່ວມລະດັບປານກາງ);

2) ກິດຈະກຳການມີສ່ວນຮ່ວມໃນການຮັບຮູ້, ເຜີຍແຜ່ຂໍ້ມູນ ແລະ ຕັດຕັ້ງປະຕິບັດວຽກງານ ການຄຸ້ມຄອງເຂດສາທິດນ້ຳເປາະ ປະກອບມີກິດຈະກຳຍ່ອຍ ເຊັ່ນ: ການມີສ່ວນຮ່ວມ ເຂົ້າປະຊຸມປຶກສາຫາລືເພື່ອຫາວິທີແກ້ໄຂບັນຫາ ແລະ ຮັບຮູ້ນະໂຍບາຍ, ກົດໝາຍທີ່ກຳນົດ ແລະ ໄດ້ເຜີຍແຜ່ໄວ້ນັ້ນ; ການມີສ່ວນຮ່ວມໃນການນຳເອົາຂໍ້ມູນ ຫຼື ນະໂຍບາຍ ລວມເຖິງລະບຽບ-ກົດໝາຍ ທີ່ກຳນົດໄວ້ນັ້ນ ໄປເຜີຍແຜ່ຕໍ່ກັບບຸກຄົນທີ່ຍັງບໍ່ຮັບຮູ້; ການມີສ່ວນຮ່ວມໃນການຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນອື່ນປະຕິບັດຕາມລະບຽບການດັ່ງ ກ່າວ ແລະ ນຳໄປເຜີຍແຜ່ໃຫ້ກັບບຸກຄົນຕໍ່ໄປ ແລະ ຊັກຊວນພີ່ນ້ອງ ຫຼື ປະຊາຊົນພາຍໃນບ້ານໃຫ້ເຂົ້າມາຊ່ວຍກັນໃນການຄຸ້ມຄອງ ເຂດສາທິດນ້ຳເປາະ ໃຫ້ຫຼາຍຂຶ້ນ; ການມີສ່ວນຮ່ວມ ໃນການປະຕິບັດຕາມການແນະນຳຂອງອົງການຈັດຕັ້ງບ້ານ, ພາກລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມປະຕິບັດຕາມນະໂຍບາຍ ແລະ ລະບຽບກົດໝາຍທີ່ກຳນົດໄວ້. ພ້ອມລົງມືປະຕິບັດວຽກງານຕົວຈິງກັບພາກສ່ວນທີ່ກ່ຽວຂ້ອງຢູ່ພາກສະໜາມ. ໃນບັນດາກິດຈະກຳການມີສ່ວນຮ່ວມທີ່ກ່າວມານີ້ ແມ່ນມີຄ່າສະເລ່ຍ ($\bar{X}$=3; ມີຄວາມໝາຍວ່າ: ມີສ່ວນຮ່ວມລະດັບປານກາງ);

3) ກິດຈະກຳການປະກອບສ່ວນ ດ້ານແຮງງານ ແລະ ດ້ານວັດຖຸສິ່ງຂອງເຂົ້າໃນວຽກງານການຄຸ້ມຄອງ ເຂດສາ ທິດນ້ຳເປາະ ປະກອບມີກິດຈະກຳຍ່ອຍ ເຊັ່ນ: ການມີສ່ວນຮ່ວມດ້ານປະກອບສ່ວນເປັນເງິນ ເພື່ອໃຫ້ເປັນເງິນກອງທຶນ ນຳໃຊ້ຄ່າໃຊ້ຈ່າຍເວລາຈັດຕັ້ງປະຕິບັດວຽກງານໂດຍມີຄ່າສະເລ່ຍ ($\bar{X}$=2; ມີຄວາມໝາຍວ່າ: ມີສ່ວນຮ່ວມລະດັບໜ້ອຍ) ແລະ ການມີສ່ວນຮ່ວມ ໃນການລົງສຳຫຼວດພື້ນທີ່ເກັບ ກຳຂໍ້ມູນຕົວຈິງ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ; ການປະ ກອບສ່ວນດ້ານແຮງງານ ໃນການປູກຕົ້ນໄມ້ ຮ່ວມກັບພາກ ສ່ວນ ທີ່ກ່ຽວຂ້ອງ; ການປະກອບສ່ວນແຮງງານໃນການປ້ອງກັນ ແລະ ປົກປັກຮັກສາ ປ່າໄມ້ (ປ່າສະຫງວນ, ປ່າຍອດນ້ຳ ແລະ ປ່າຕົ້ນນ້ຳ); ການປະກອບສ່ວນແຮງງານ (ອະ ນາໄມ ແລະ ບົວລະບັດຮັກສາ) ເຂດສາທິດນ້ຳເປາະໃນຈຳນວນ 4 ກິດຈະກຳນີ້ ແຕ່ລະກິດຈະກຳ ມີຄ່າສະເລ່ຍ ($\bar{X}$=3; ມີຄວາມໝາຍວ່າ: ມີສ່ວນຮ່ວມລະດັບປານກາງ);

4) ກິດຈະກຳການມີສ່ວນຮ່ວມໃນ ການວາງແຜນ, ປະຕິບັດຕາມແຜນ, ຕິດຕາມກວດກາ, ປະເມີນ ແລະ ລາຍງານຜົນ ຂອງການຄຸ້ມຄອງ ເຂດສາທິດນ້ຳເປາະ ປະກອບມີກິດຈະກຳຍ່ອຍເຊັ່ນ: ການມີສ່ວນຮ່ວມໃນການກຳນົດແຜນງານ ຫຼື ວາງແຜນໃນການຄຸ້ມຄອງ; ການມີສ່ວນຮ່ວມ ໃນການປັບປຸງແຜນ, ຈັດຕັ້ງປະຕິບັດຕາມແຜນກິດຈະກຳທີ່ໄດ້ກຳນົດໄວ້ ໃຫ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍ; ການມີສ່ວນຮ່ວມໃນການຕິດຕາມກວດກາໜ້າວຽກທີ່ໄດ້ຈັດຕັ້ງປະຕິບັດຕາມແຜນທີ່ໄດ້ວາງໄວ້; ການມີສ່ວນຮ່ວມໃນການປະເມີນຜົນຂອງແຜນການຈັດຕັ້ງປະຕິບັດຕາມແຜນ, ຕາມນະໂຍບາຍ ແລະ ລະບຽບກົດໝາຍທີ່ໄດ້ກຳນົດໄວ້; ການມີສ່ວນຮ່ວມໃນການລາຍງານສະພາບບັນຫາ ແລະ ບັນຫາການຄຸ້ມຄອງເຂດສາທິດນ້ຳເປາະ; ການມີສ່ວນຮ່ວມໃນການລາຍງານຜົນຂອງການຄຸ້ມຄອງເຂດສາທິດນ້ຳເປາະ; ການມີສ່ວນຮ່ວມໃນການລາຍງານຜົນຂອງການຈັດຕັ້ງປະຕິບັດຕາມແຜນທີ່ໄດ້ກຳນົດໄວ້. ບັນດາກິດຈະກຳການມີສ່ວນຮ່ວມທີ່ກ່າວມານີ້ ແມ່ນມີຄ່າສະເລ່ຍ ($\bar{X}$=3; ມີຄວາມໝາຍວ່າ: ມີສ່ວນຮ່ວມລະດັບປານກາງ).

### 3.4. ຜົນການສົ່ງເສີມກິດຈະກຳທີ່ປະຊາຊົນໄດ້ຮັບຜົນປະໂຫຍດ ແລະ ມີລາຍຮັບຈາກກິດຈະກຳຕ່າງໆຢູ່ເຂດດັ່ງກ່າວ

ຜ່ານການສຳພາດກຸ່ມຕົວຢ່າງ ໂດຍສະເພາະ ອົງການຈັດຕັ້ງ ຫຼື ພາກສ່ວນທີ່ກ່ຽວຂ້ອງ (ຫ້ອງການທີ່ກ່ຽວຂ້ອງ) ແລະ ອຳນາດການປົກຄອງຂັ້ນບ້ານ (ນາຍບ້ານ) ໂດຍໄດ້ໃຫ້ຄວາມຄິດເຫັນຕໍ່ກັບ ວຽກງານການສົ່ງເສີມບັນດາກິດຈະກຳຕ່າງໆ ທີ່ເຮັດໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດໃນດ້ານຕ່າງໆ ລວມເຖິງການສ້າງລາຍໄດ້ ຈາກການພັດທະນາເຂດສາທິດນ້ຳເປາະ ແຫ່ງນີ້ ເຊິ່ງປະກອບມີລາຍລະອຽດດັ່ງຕໍ່ໄປນີ້:

1) ສ້າງແຫຼ່ງທ່ອງທ່ຽວແບບອະນຸລັກທາງທຳມະຊາດ ໃຫ້ມີນັກທ່ອງທ່ຽວເຂົ້າມາທ່ຽວຊົມ ເພື່ອໃຫ້ເກີດມີການໃຊ້ຈ່າຍ ແລະ ເຮັດໃຫ້ເສດຖະກິດຢູ່ເຂດພື້ນທີ່ດັ່ງກ່າວນັ້ນດີຂຶ້ນ;

2) ສ້າງບັນດາກິດຈະກຳທີ່ສາມາດເຮັດໃຫ້ປະຊາຊົນໃນພື້ນທີ່ໄດ້ຮັບຜົນປະໂຫຍດໃຫ້ຫຼາຍທີ່ສຸດບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ;

3) ສ້າງອາຊີບ ຫຼື ຮັບຄືນໃນພື້ນທີ່ເຂົ້າໄປເຮັດວຽກ ນໍາບັນດາກິດຈະກໍາຂອງ ບັນດາແຫຼ່ງທ່ອງທ່ຽວທີ່ສ້າງຂຶ້ນມາ ນັ້ນ;

4) ສົ່ງເສີມດ້ານຄວາມຮູ້ ແລະ ຝຶກອົບຮົມໃຫ້ກັບ ປະຊາຊົນທີ່ໃຫ້ມີຄວາມຮູ້, ຄວາມສາມາດໃນການປະກອບ ອາຊີບ ເພື່ອເຮັດໃຫ້ເຂົາເຈົ້າມີວຽກເຮັດງານທໍາ ຕາມຄວາມ ຕ້ອງການຂອງບັນດາກິດຈະການຕ່າງໆທີ່ສ້າງຂຶ້ນໃນພື້ນທີ່;

5) ສົ່ງເສີມໃຫ້ມີການຜະລິດໂດຍສະເພາະ, ການຜະ ລິດທາງດ້ານກະສິກໍາ ຫຼື ການຜະລິດທີ່ສະອາດ ເພື່ອຕອບ ສະໜອງໃຫ້ກັບບັນດາຮ້ານຄ້າ, ນັກລົງທຶນ ແລະ ຂາຍໃຫ້ ກັບບັນດານັກທ່ອງທ່ຽວທີ່ເຂົ້າມາທ່ຽວຊຸມຢູ່ເຂດດັ່ງກ່າວ.

## 4. ວິພາກຜົນ

ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ໃນ ການຄຸ້ມຄອງເຂດສາທິດນໍ້າເປາະ ເມືອງວັງວຽງ, ແຂວງ ວຽງຈັນ ຜົນການສຶກສາ ພົບວ່າ ການມີສ່ວນຮ່ວມໃນການ ຄຸ້ມຄອງເຂດສາທິດນໍ້າເປາະລວມມີ 6 ຫ້ອງການ ເຊິ່ງໄດ້ມີ ສ່ວນຮ່ວມດ້ານວຽກງານການຄຸ້ມຄອງເຂດສາທິດນໍ້າເປາະ ໃນດ້ານວຽກງານຕ່າງໆ ເຊັ່ນ: ການສ້າງນິຕິກໍາ, ລະບຽບ-ກົດໝາຍ, ການສ້າງລະບຽບການສະເພາະ ແລະ ກໍານົດນະ ໂຍບາຍ ພ້ອມລົງເຜີຍແຜ່ ໃຫ້ທຸກພາກສ່ວນໄດ້ຮັບຮູ້ຢ່າງ ທົ່ວເຖິງ ແລະ ເປັນເຈົ້າການ ໂດຍສົມທົບກັບທ້ອງຖິ່ນ ເພື່ອ ຈັດກອງປະຊຸມປຶກສາຫາລື ແລະ ຫາແນວທາງການຄຸ້ມ ຄອງ, ສົ່ງເສີມບົດບາດຍິງ-ຊາຍ ໂດຍໃຫ້ມີຜູ້ຍິງເຂົ້າຮ່ວມ ຢ່າງໜ້ອຍ 30% ໃນຂັ້ນພື້ນຖານ ແລະ ໄດ້ຝຶກອົບຮົມທາງ ດ້ານເຕັກນິກສະເພາະໃຫ້ກັບຊຸມຊົນທຸກບ້ານທີ່ຢູ່ເຂດສາ ທິດນໍ້າເປາະ ໂດຍສ້າງຈິດສໍານຶກ ແລະ ສົ່ງເສີມການນໍາໃຊ້ ຊັບພະຍາກອນທໍາມະຊາດແບບປະຢັດ ຫຼຸດຜ່ອນການນໍາ ໃຊ້ຊັບພະຍາກອນທໍາມະຊາດແບບຊະຊາຍ ພ້ອມທັງວາງ ແຜນ ການຄຸ້ມຄອງຢ່າງຮັດກຸມ, ມີປະສິດຕິພາບ ແລະ ມີ ລັກສະ ນະທີ່ຍືນຍົງ. ບັນດາວຽກງານທີ່ດັ່ງກ່າວນີ້ ພາກສ່ວນພະນັກ ງານຫ້ອງການພາກລັດ ໄດ້ເຂົ້າຮ່ວມແບບ ປົກກະຕິ ການສຶກສານີ້ໄດ້ສອດຄອງກັບ ແຜນຄຸ້ມຄອງອ່າງ ຮັບນໍ້າຍ່ອຍ "ນໍ້າເປາະ 2023-2027" ແລະ ພົບວ່າ ວຽກ ງານຄຸ້ມຄອງອ່າງຮັບ ນໍ້າຍ່ອຍ ຫຼື ເຂດພິເສດທາງດ້ານການ ພັດທະນາຕິດພັນກັບ ແຫຼ່ງທ່ອງທ່ຽວ ທຸກພາກສ່ວນລ້ວນແຕ່ ມີສ່ວນຮ່ວມ ຫຼື ມີພາລະບົດບາດໃນການຄຸ້ມຄອງ ໂດຍອີງ ຕາມກົດໝາຍໄດ້ກໍານົດໄວ້ ຕາມຂັ້ນຕອນ ໂດຍປະກອບມີ: ການສ້າງກົນໄກການຄຸ້ມຄອງ ແລະ ການມີສ່ວນຮ່ວມໃນອ່າງ ຮັບນໍ້າ ຕາມຫຼັກການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມ ສານ ແນໃສ່ເຮັດໃຫ້ບັນດາຜູ້ມີສ່ວນຮ່ວມ ໃນການຄຸ້ມຄອງ, ບໍລິຫານຈັດການນໍ້າການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ ນໍາເອົາເນື້ອໃນດັ່ງກ່າວ ມາເຊື່ອມສານເຂົ້າໃນພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການໃນອ່າງ ຮັບນໍ້າຍ່ອຍ ນໍ້າເປາະ ໄດ້ຢ່າງມີປະສິດທິຜົນ(ພະແນກ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ແຂວງ ວຽງຈັນ, 2023)ແລະ ສອດຄ່ອງກັບການສຶກສາຂອງ (Phongsenpheng, 2022) ສຶກສາການມີສ່ວນຮ່ວມຂອງ ປະຊາຊົນໃນການຄຸ້ມຄອງໜ້າເຂື່ອນນໍ້າອູ 4 ແລະ ພົບວ່າ: ວຽກງານການຄຸ້ມຄອງຂອງພາກລັດສ່ວນໃຫຍ່ ແມ່ນ ກໍາ ນົດລະບຽບ-ກົດໝາຍ, ນະໂຍບາຍ ພ້ອມທັງເຜີຍແຜ່ ແລະ ໃຫ້ມີການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ການເພີ່ມມາດ ຕະການໃນການຄຸ້ມຄອງ ແລະ ມີການວາງແຜນ, ການຝຶກ ອົບຮົມ ພ້ອມອໍານວຍຄວາມສະດວກ ໃຫ້ແກ່ຜູ້ທີ່ເຂົ້າມາ ມີສ່ວນຮ່ວມໃນການຄຸ້ມຄອງໜ້າເຂື່ອນນໍ້າອູ 4, ການປຸກ ຈິດສໍານຶກໃຫ້ປະຊາຊົນ ແລະ ອື່ນໆ. ສໍາລັບ ການມີສ່ວນ ຮ່ວມຂອງປະຊາຊົນໃນການຄຸ້ມຄອງເຂດສາທິດນໍ້າເປາະ ພົບວ່າ: ປະຊາຊົນສ່ວນໃຫຍ່ໄດ້ມີສ່ວນຮ່ວມໃນດ້ານ ການ ຮັບຮູ້ ຕາມການແນະນໍາຂອງອົງການ ຈັດຕັ້ງບ້ານ, ພາກລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມປະຕິບັດຕາມນະໂຍບາຍ ແລະ ລະບຽບກົດໝາຍທີ່ກໍານົດໄວ້ ໜຶ່ງໃນນັ້ນກໍ່ຄື ການ ປະກອບສ່ວນ ດ້ານແຮງງານ (ການອະນາໄມ, ບົວລະບັດ ຮັກສາ, ການປູກຕົ້ນໄມ້ ລວມທັງການປ້ອງກັນ ແລະ ປົກ ປັກຮັກສາ ເຂດປ່າສະຫງວນ, ປ່າຍອດນໍ້າ ແລະ ປ່າຕົ້ນນໍ້າ) ແລະ ມີສ່ວນຮ່ວມໃນການຮັບຮູ້, ການເຜີຍແຜ່ຂໍ້ມູນ ແລະ ຕັດຕັ້ງປະຕິບັດວຽກງານ ການຄຸ້ມຄອງເຂດສາທິດນໍ້າເປາະ ເຊັ່ນ: ການເຂົ້າປະຊຸມປຶກສາຫາລືເພື່ອຫາວິທີແກ້ໄຂບັນຫາ ແລະ ຮັບຮູ້ນະໂຍບາຍ, ກົດໝາຍທີ່ກໍານົດ ແລະ ໄດ້ເຜີຍແຜ່ ໄວ້ນັ້ນ; ພ້ອມທັງນໍາເອົາຂໍ້ມູນດັ່ງກ່າວ ເຜີຍແຜ່ໃຫ້ຄົນອື່ນ ຮັບຮູ້ນໍາ ແລະ ປະຕິບັດຕາມ. ການມີສ່ວນຮ່ວມດັ່ງກ່າວມາ ນີ້ເຫັນວ່າ ປະຊາຊົນມີສ່ວນຮ່ວມໃນລະດັບຫຼາຍ. ການສຶກ ສານີ້ໄດ້ສອດກັບການສຶກສາຂອງ (Phetinzee, 2021) ສຶກສາກ່ຽວກັບ ສຶກສາການມີສ່ວນຮ່ວມຂອງປະຊາຊົນໃນ ການອະນຸລັກປ່າຍອດ ນໍ້າ ຫ້ວຍໂທນ ແລະ ພົບວ່າ ການມີ ສ່ວນຮ່ວມຂອງປະຊາ ຊົນໃນການອະນຸລກປ່າຍອດນໍ້າໂດຍ ໄດ້ມີສ່ວນຮ່ວມ ໃນດ້ານ ການຈັດຕັ້ງປະຕິບັດວຽກງານຕົວ ຈິງຫຼາຍກວ່າວຽກງານອື່ນ ເຊັ່ນ: ມີສ່ວຮ່ວມໃນການ

ບົວລະບັດຮັກສາ, ການປູກຕົ້ນໄມ້, ການປ້ອງກັນ ແລະ ປົກປັກຮັກສາ ເຂດປ່າສະ ຫງວນ, ປ່າຍອດນໍ້າ ແລະ ປ່າຕົ້ນນໍ້າ ແລະ ແຫຼ່ງນໍ້າ. ນອກນັ້ນ, ຍັງໄດ້ມີສ່ວນຮ່ວມໃນການເຂົ້າຮ່ວມກອງປະຊຸມຂັ້ນບ້ານ, ການປະຕິບັດການແນະນໍາ, ນະໂຍບາຍ ແລະ ກົດ ໝາຍທີ່ກໍານົດໄວ້ ແລະ ໄດ້ສອດຄອງກັບການສຶກສາຂອງ (Phouthichay, 2021) ສຶກສາກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນໃນການຄຸ້ມຄອງນໍາໃຊ້ນໍ້າຊົນລະປະທານແບບຍືນຍົງ ແລະ ພົບວ່າ: ປະຊາຊົນສ່ວນໃຫຍ່ມີສ່ວນຮ່ວມດ້ານການເຂົ້າຮ່ວມກອງປະຊຸມ ຮັບຟັງນະໂຍບາຍ, ລະບຽບ-ກົດໝາຍທີ່ກໍານົດ ແລະ ເຜີຍແຜ່ໄວ້; ພ້ອມປະຕິບັດຕາມການແນະນໍາຂອງນາຍບ້ານ-ພາກສ່ວນທີ່ກ່ຽວຂ້ອງ ແລະ ມີສ່ວນຮ່ວມສຶກສາບັນຫາ ແລະ ແນວທາງແກ້ໄຂ ເຊັ່ນ: ການກໍານົດ ຫຼື ຈັດແບ່ງປະເພດຂອງບັນຫາ ແລະ ບົ່ງບອກສາເຫດ, ຄວາມຮຸນແຮງ ຫຼື ຄວາມອັນຕະລາຍຂອງບັນດັ່ງກ່າວ; ການມີສ່ວນຮ່ວມໃນການບອກຕໍ່ໃຫ້ປະຊາຊົນພາຍໃນບ້ານຮັບຮູ້ເຖິງບັນຫາທີ່ເກີດຂຶ້ນໃນພື້ນທີ່ ແລະ ມີການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ແລະ ສະເໜີແນວຄວາມຄິດ ຫຼື ແນວທາງ ເພື່ອຫາວິທີແກ້ໄຂບັນຫາ ແລະ ຍັງໄດ້ປະ ກອບສ່ວນດ້ານວັດຖຸສິ່ງຂອງໃນກໍລະນີທີ່ບໍ່ສາມາດປະກອບສ່ວນດ້ານແຮງງານໄດ້ (ອຸປະກອນອອກແຮງງານ, ນໍ້າດື່ມ, ຢາສູບ ແລະ ເງິນກອງທຶນນໍາໃຊ້ຄ່າໃຊ້ຈ່າຍເວລາຈັດຕັ້ງປະຕິບັດວຽກງານ) ແລະ ມີສ່ວນຮ່ວມໃນການວາງແຜນ, ປະຕິບັດຕາມແຜນ, ຕິດຕາມກວດກາ, ປະເມີນ ແລະ ລາຍງານຜົນ ຂອງແຜນງານໃນຈັດຕັ້ງປະຕິບັດວຽກງານການຄຸ້ມຄອງເຂດສາທິດນໍ້າເປາະ ຕາມວຽກງານ ຫຼື ກິດຈະກໍາການມີສ່ວນຮ່ວມດັ່ງທີ່ໄດ້ກ່າວມານັ້ນ. ເຊິ່ງການມີສ່ວນຮ່ວມຂອງປະຊາຊົນໃນດ້ານນີ້ ເຫັນວ່າ ມີສ່ວນຮ່ວມລະດັບປານກາງ ຜົນການສຶກສານີ້ໄດ້ສອດຄອງກັບການສຶກສາຂອງ (Chanthalangsi, 2021) ສຶກສາກ່ຽວກັບ ສຶກສາການຄຸ້ມຄອງສາຍນໍ້າຊອງ ເພື່ອການທ່ອງທ່ຽວ ຢູ່ເມືອງວັງວຽງ, ແຂວງວຽງຈັນ ແລະ ພົບວ່າ ປະຊາຊົນໄດ້ມີສ່ວນຮ່ວມດ້ານການເຂົ້າຮ່ວມກອງປະຊຸມ ແລະ ປະຕິບັດການແນະນໍາຂອງນາຍບ້ານ-ພາກສ່ວນທີ່ກ່ຽວຂ້ອງ ແລະ ປະຕິບັດນະໂຍບາຍ, ລະບຽບ-ກົດໝາຍທີ່ກໍານົດ ແລະ ເຜີຍແຜ່ໄວ້ ພ້ອມໄດ້ບອກຕໍ່ໃຫ້ປະຊາຊົນພາຍໃນບ້ານຮັບຮູ້ນໍາ ແລະ ມີສ່ວນຮ່ວມດ້ານການສະເໜີແນວຄວາມຄິດ ຫຼື ແນວທາງໃນການຄຸ້ມຄອງສາຍນໍ້າຊອງ ໃຫ້ກາຍເປັນແຫຼ່ງທ່ອງທ່ຽວທີ່ມີປະ ສິດທິພາບ ແລະ ມີຄວາມຍືນຍົງທາງດ້ານຊັບພະຍາກອນທໍາມະຊາດ. ໃນການສຶກສາການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງເຂດສາທິດນໍ້າເປາະ ເມືອງວັງວຽງ, ແຂວງວຽງຈັນ ໃນຄັ້ງນີ້ ໂດຍອີງໃສ່ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະ, ພະນັກງານຫ້ອງການ ຫຼື ພາກລັດ ແລະ ປະຊາຊົນໃນພື້ນທີ່ ໄດ້ສະເໜີແນວຄວາມຄິດຕໍ່ກັບແນວທາງໃນການຄຸ້ມຄອງເຂດສາ ທິດນໍ້າເປາະໃຫ້ມີປະສິດທິພາບ ເຊັ່ນ: ບັນດານິຕິກໍາທີ່ສ້າງຂຶ້ນນັ້ນຄວນເຜີຍແຜ່ ໃຫ້ທົ່ວເຖິງ; ສົ່ງເສີມບຸກຄົນ, ນິຕິ ບຸກຄົນ ແລະ ກຸ່ມຄົນ ໃຫ້ເຂົ້າໄປມີສ່ວນຮ່ວມຫຼາຍຂຶ້ນ; ສະ ເໜີໃຫ້ມີການຈັດສັນງົບປະມານ ຫຼື ສ້າງກອງທຶນ ສໍາລັບການຄຸ້ມຄອງເຂດສາທິດນໍ້າເປາະ ໂດຍເລີ່ມຈາກຫົວໜ່ວຍທຸລະກິດ ແລະ ປຸກຈິດສໍານຶກໃຫ້ະຊາຊົນທີ່ອາໄສຢູ່ໃນເຂດພື້ນທີ່ໃຫ້ມີຄວາມເຂົ້າໃຈເຖິງຄວາມໝາຍ, ຄວາມສໍາຄັນ, ຂໍ້ດີ-ຂໍ້ເສຍ ແລະ ຜົນປະໂຫຍດ ທີ່ປະຊາຊົນຄາດວ່າຈະໄດ້ຮັບຈາກເຂດສາທິດນໍ້າເປາະ. ທີ່ສໍາຄັນ ຜູ້ທີ່ເຂົ້າມາມີສ່ວນຮ່ວມຄວນໄດ້ຮັບການຊຸກຍູ້, ສົ່ງເສີມ ພ້ອມທັງອໍານວຍຄວາມສະດວກດ້ານອຸປະກອນ ແລະ ເຄື່ອງມືຢ່າງພຽງພໍ ພ້ອມທັງໄດ້ຮັບການຝຶກອົບຮົມ ຫຼື ໄດ້ຮັບການຖອດຖອນບົດຮຽນ ຈາກພາກສ່ວນລັດ ຫຼື ຈາກພາກສ່ວນທີ່ກ່ຽວ ໃນການຄຸ້ມຄອງເຂດສາທິດນໍ້າເປາະ ເພື່ອເຮັດວຽກງານການມີສ່ວນຮ່ວມການຄຸ້ມຄອງນັ້ນ ມີປະສິດທິພາບ. ນອກນັ້ນ, ຄວນມີການວາງແຜນ ໂດຍກໍານົດຈຸດປະສົງໃຫ້ຊັດເຈນ ເຂົ້າໃຈງ່າຍ, ບໍ່ຊັບຊ້ອນ ແລະ ນໍາໄປປະຕິບັດໄດ້ ທີ່ສໍາຄັນຕ້ອງສອດຄ່ອງກັບຈຸດປະສົງຫຼັກ ແລະ ນະໂຍບາຍຫຼັກຂອງແຕ່ລະໜ່ວຍງານ ໂດຍນໍາໃຊ້ນັກວິຊາການເຄື່ອງມືທີ່ທັນສະໄໝເປັນຕົ້ນແມ່ນ ບັນດາແບບຈໍາລອງ ຫຼື ໂມເດວຕ່າງໆ . ເຂົ້າຊ່ວຍໃນການຄຸ້ມຄອງເຂດສາທິດນໍ້າເປາະ, ລວມເຖິງ ແຫຼ່ງນໍ້າ ແລະ ຊັບພະຍາກອນນໍ້າ ຢູ່ພື້ນທີ່ດັ່ງກ່າວໃຫ້ຫຼາຍຂຶ້ນກ່ອນເກົ່າ ເພື່ອເຮັດໃຫ້ວຽກງານການຄຸ້ມຄອງອ່າງຮັບ ນໍ້າດັ່ງກ່າວ ມີປະສິດທິພາບ ແລະ ໄດ້ຮັບຜົນປະໂຫຍດສູງສຸດ. ຜົນຂອງການສຶກສານີ້ໄດ້ສອດຄອງກັບ ແຜນຄຸ້ມຄອງ ແລະ ພັດທະນາອ່າງຮັບນໍ້າຍ່ອຍນໍ້າຊອງແບບປະສົມປະສານ (2015-2020) ແລະ ຍຸດທະສາດ ຊັບພະຍາກອນນໍ້າແຫ່ງຊາດ ແຕ່ນີ້ເຖິງປີ 2025 ແລະ ແຜນດໍາເນີນງານ ຊັບພະຍາກອນນໍ້າ (2016-2025) (ກົມຊັບພະຍາກອນນໍ້າ, 2014); ກົດໝາຍ ວ່າດ້ວຍ ປ່າໄມ້ ແລະ ກົດໝາຍ ວ່າດ້ວຍການປົກ

ປົກຮັກສາສິ່ງແວດລ້ອມ (ກົມປ່າໄມ້ ແລະ ກົມສິ່ງແວດລ້ອມ, 2017) ວິໄສທັດຮອດ ປີ 2030 ແລະ ຍຸດທະສາດຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກົມຊັບພະຍາກອນນ້ຳ, 2020) ແລະ ພົບວ່າ ວຽກງານການຄຸ້ມຄອງ ຕ້ອງມີລະບຽບ-ກົດໝາຍ ແລະ ນະໂຍບາຍ ພ້ອມທັງສົ່ງເສີມ, ອຳນວຍຄວາມສະດວກ ແລະ ຈັດຝຶກອົບຮົມ, ປຸກຈິດສຳນຶກ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງນຳໃຊ້ເຄື່ອງທີ່ທັນສະໄໝເຂົ້າມາຊ່ວຍ ເພື່ອເຮັດວຽກງານການຄຸ້ມຄອງນັ້ນ ມີປະສິດທິພາບ. ສຳລັບ ວຽກງານການສົ່ງເສີມກິດຈະກຳທີ່ປະຊາຊົນໄດ້ຮັບຜົນປະໂຫຍດ ແລະ ມີລາຍຮັບຈາກກິດຈະກຳຕ່າງໆ ຢູ່ເຂດສາທິດນ້ຳເປາະ ເຊິ່ງປະກອບມີ ການສ້າງແຫຼ່ງທ່ອງທ່ຽວແບບອະນຸລັກທາງທຳມະຊາດ ໃຫ້ມີນັກທ່ອງທ່ຽວເຂົ້າມາທ່ຽວຊົມ ເພື່ອໃຫ້ເກີດມີການໃຊ້ຈ່າຍ ແລະ ເຮັດໃຫ້ເສດຖະກິດຢູ່ເຂດພື້ນທີ່ດັ່ງກ່າວນັ້ນດີຂຶ້ນ; ສ້າງບັນດາກິດຈະກຳທີ່ສາມາດເຮັດໃຫ້ປະຊາຊົນ ໃນພື້ນທີ່ໄດ້ຮັບຜົນປະໂຫຍດໃຫ້ຫຼາຍທີ່ສຸດບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ; ສ້າງອາຊີບ ຫຼື ຮັບຄົນໃນພື້ນທີ່ເຂົ້າໄປເຮັດວຽກ ນຳບັນດາກິດຈະກຳຂອງ ບັນດາແຫຼ່ງທ່ອງທ່ຽວທີ່ສ້າງຂຶ້ນມານັ້ນ; ສົ່ງເສີມດ້ານຄວາມຮູ້ ແລະ ຝຶກອົບຮົມໃຫ້ກັບປະ ຊາຊົນໃຫ້ມີຄວາມຮູ້, ຄວາມສາມາດໃນການປະກອບອາ ຊີບ ເພື່ອເຮັດໃຫ້ເຂົາເຈົ້າມີວຽກເຮັດງານທຳ ຕາມຄວາມຕ້ອງການຂອງບັນດາກິດຈະການຕ່າງໆທີ່ສ້າງຂຶ້ນໃນພື້ນທີ່; ສົ່ງເສີມໃຫ້ມີການຜະລິດໂດຍສະເພາະ, ການຜະລິດທາງດ້ານກະສິກຳ ຫຼື ການຜະລິດທີ່ສະອາດ ເພື່ອຕອບສະໜອງໃຫ້ກັບບັນດາຮ້ານຄ້າ, ນັກລົງທຶນ ແລະ ຂາຍໃຫ້ກັບບັນດານັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມຢູ່ເຂດດັ່ງກ່າວ ການສຶກສານີ້ໄດ້ສອດກັບການລາຍງານຂອງ (ກົມຊັບພະຍາກອນນ້ຳ, 2023) ແຜນຄຸ້ມຄອງເຂດສາທິດການຄຸ້ມຄອງຊັບພະຍາ ກອນນ້ຳແບບເຊື່ອມສານແຫ່ງຊາດ-ນ້ຳເປາະ ເມືອງວັງວຽງ, ແຂວງວຽງຈັນ ແລະ ພົບວ່າ: ການສົ່ງເສີມການທ່ອງທ່ຽວທາງທຳມະຊາດແບບອະນຸລັກ ໂດຍການມີສ່ວນຮ່ວມຂອງປະຊາຊົນໃນເຂດໃກ້ຄຽງຂອງເຂດສາທິດດັ່ງກ່າວ ເພື່ອຕອບສະໜອງໃຫ້ແກ່ ການພັດທະນາ ເສດຖະກິດ-ສັງ ຄົມ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ທີ່ດຳລົງຊີວິດຢູ່ອ້ອມຂ້າງ ເຂດດັ່ງກ່າວໃຫ້ມີປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ.

## 5. ສະຫຼຸບ

ຜ່ານການສຶກສາ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງເຂດສາທິດນ້ຳເປາະ ເມືອງວັງວຽງ, ແຂວງວຽງຈັນ ສະຫຼຸບໄດ້ວ່າ ອົງການຈັດຕັ້ງ ຫຼື ຫ້ອງການທີ່ກ່ຽວຂ້ອງ ໄດ້ມີສ່ວນຮ່ວມໃນການຄຸ້ມຄອງເຂດສາທິດນ້ຳເປາະ ລວມມີ 10 ກິດຈະກຳ. ໃນນັ້ນ, ມີ 07 ກິດຈະກຳ ໄດ້ເຂົ້າຮ່ວມແບບປົກກະຕິ ແລະ ອີກ 03 ກິດຈະກຳໄດ້ເຂົ້າຮ່ວມໃນບາງຄັ້ງຄາວ) ແລະ ການມີສ່ວນຮ່ວມຂອງປະ ຊາຊົນໃນການຄຸ້ມຄອງເຂດສາທິດນ້ຳເປາະ ລວມມີ 4 ກິດຈະກຳ ເຊັ່ນ: ການມີສ່ວນຮ່ວມ ດ້ານການສຶກສາສະພາບບັນຫາ ແລະ ຫາແນວທາງແກ້ໄຂບັນຫາ; ການມີສ່ວນຮ່ວມໃນການຮັບຮູ້, ເຜີຍແຜ່ຂໍ້ມູນ ແລະ ຕັດຕັ້ງປະຕິບັດວຽກງານ ການຄຸ້ມຄອງ; ການປະກອບສ່ວນ ດ້ານແຮງງານ ແລະ ດ້ານວັດຖຸສິ່ງຂອງເຂົ້າໃນວຽກງານການຄຸ້ມຄອງ; ການມີສ່ວນຮ່ວມໃນ ການວາງແຜນ, ປະຕິບັດຕາມແຜນ, ຕິດ ຕາມກວດກາ, ປະເມີນ ແລະ ລາຍງານຜົນ ຂອງການຄຸ້ມຄອງ ເຂດສາທິດນ້ຳເປາະ ໃນ 4 ກິດຈະກຳ ເຫັນວ່າມີລະ ດັບການມີສ່ວນຮ່ວມເທົ່າກັບ ໂດຍຄ່າສະເລ່ຍ ($\bar{X}$=3; ມີຄວາມໝາຍວ່າ: ມີສ່ວນຮ່ວມລະດັບປານກາງ). ສຳລັບ ການສົ່ງເສີມກິດຈະກຳທີ່ປະຊາຊົນໄດ້ຮັບຜົນປະໂຫຍດ ແລະ ມີລາຍຮັບຈາກເຂດສາທິດນ້ຳເປາະ ເຫັນວ່າ ສົ່ງເສີມການພັດທະນາແຫຼ່ງທ່ອງທ່ຽວ, ການສ້າງອາຊີບ ຫຼື ຮັບຄົນໃນພື້ນທີ່ເຂົ້າໄປເຮັດວຽກນຳບັນດາກິດຈະກຳນ ໃນແຫຼ່ງທ່ອງທ່ຽວທີ່ສ້າງຂຶ້ນມານັ້ນ; ສົ່ງເສີມດ້ານຄວາມຮູ້ ແລະ ຝຶກອົບຮົມໃຫ້ກັບປະຊາຊົນທີ່ໃຫ້ມີຄວາມຮູ້ໃນການປະ ກອບ ຕາມຄວາມຕ້ອງການຂອງບັນດາກິດຈະການຕ່າງໆທີ່ສ້າງຂຶ້ນໃນພື້ນທີ່; ພ້ອມທັງສົ່ງເສີມການຜະລິດໂດຍສະ ເພາະ, ການຜະລິດທາງດ້ານກະສິກຳ, ສ້າງກິດຈະການ ແລະ ວຽກງານຕ່າງໆ ທີ່ເຮັດໃຫ້ປະຊາຊົນໃນພື້ນທີ່ໄດ້ຮັບຜົນປະ ໂຫຍດໃຫ້ຫຼາຍທີ່ສຸດ ຈາກທາງກົງ ຫຼື ທາງອ້ອມທັງປະຈຸບັນ ແລະ ອະນາຄົດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກົດໝາຍ ວ່າດ້ວຍປ່າໄມ້. (2017). ກົມປ່າໄມ້, ກະຊວງ ກະສິກຳ ແລະ ປ່າໄມ້.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມຊັບພະຍາກອນນ້ຳ. (2014). ແຜນຄຸ້ມຄອງ ແລະ ພັດທະນາອ່າງຮັບນ້ຳຍ່ອຍ ນ້ຳຊອງ ແບບ ປະສົມປະສານ (2015-2020). ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມຊັບພະຍາກອນນ້ຳ. (2014). ຍຸດທະສາດ ຊັບພະຍາກອນນ້ຳແຫ່ງຊາດ ແຕ່ນີ້ເຖິງປີ 2025 ແລະ ແຜນດຳເນີນງານ ຊັບພະຍາກອນນ້ຳ ປີ 2016-2025 (ສະບັບຮ່າງ).

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມສິ່ງແວດລ້ອມ. (2017). ກົດໝາຍ ວ່າດ້ວຍການ ປົກປັກຮັກສາສິ່ງແວດລ້ອມ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມຊັບພະຍາກອນນ້ຳ. (2019). ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ.

ກົມຊັບພະຍາກອນນ້ຳ. (2020). ວິໄສທັດຮອດປີ 2030 ແລະ ຍຸດທະສາດຄຸ້ມຄອງ ນ້ຳ ແລະ ຊັບພະຍາກອນນ້ຳ ແຫ່ງຊາດ, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມຊັບພະຍາກອນນ້ຳ. (2023). ແຜນຄຸ້ມຄອງເຂດ ສາທິດການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມ ສານແຫ່ງຊາດ-ນ້ຳເປາະ ເມືອງວັງວຽງ, ແຂວງວຽງ ຈັນ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງວຽງຈັນ. (2023). ແຜນຄຸ້ມຄອງອ່າງຮັບນ້ຳ ຍ່ອຍ ນ້ຳເປາະ 2023-2027.

Douangpaseuth, B. (2019). Assement of Irrigation System Management of NamHoum Reservoir Irrigation Propect, Nasaythong District, Vientiane Capital. Department of Water Resources Development and Management, Faculty of Water Resources, National University of Laos, Lao PDR.

Phetaoi, K. (2021). Study of changes land use of watershed forest in the Longnay Village group. Department of Water Resources Development and Management, Faculty of Water Resources, National University of Laos, Lao PDR.

Phongsenpheng, P. (2022). Study the participation of the people in the management of the pageNam Ou Dam 4. Department of Water Resources Development and Management, Faculty of Water Resources, National University of Laos, Lao PDR.

Phouthichay, S. (2021). Community Participation of Sustainable Water Management of the Nam Houm Irrigation at Naxaythong District Vientiane Capital. Department of Water Resources Development and Management, Faculty of Water Resources, National University of Laos, Lao PDR.

Phetinzee, T. (2021). Study public participation of people in conservation watershed forest of Houyton. Department of Water Resources Development and Management, Faculty of Water Resources, National University of Laos, Lao PDR.

Phommalin, L. (2014). Hydrological study of the Nam Song Basin using the HEC-HMS Program Department of Water Resources Engineering, Faculty of Engineering National University of Laos, Lao PDR.

Chanthalangsi, K. (2021). Study the management of Nam Song River for tourism in Vang Vieng District. Department of Water Resources Development and Management, Faculty of Water Resources, National University of Laos, Lao PDR.

Krejcie & Morgan, D. W. (1970). *Determining sample size from research activities*. Journal of Educational and Psychological Measurement. 30(3), 607-610.